# ວິທີອູ້ມລູກຂອງທ່ານໃນເວລາທີ່ສັກຢາວັກຊີນ

ອູ້ມເດັກນ້ອຍສາມາດຊ່ວຍຫຼຸດຜ່ອນຄວາມກັງວົນ ແລະ ປ້ອງກັນການເໜັງ ຕີງໃນຂະນະທີ່ລູກຂອງທ່ານກໍາລັງຮັບການສັກຢາວັກຊີນ. ພ້ອມທັງ ເປັນ ການບຽງເບນຄວາມສົນໃຈ, ຈົ່ງເລົ່າເລື່ອງຕ່າງໆ, ຮ້ອງເພງ ຫຼື ຫາຍໃຈ ເລິກໆ, ການອູ້ມເດັກນ້ອຍແບບສະບາຍໆ ຊ່ວຍເຮັດໃຫ້ການສັກຢາວັກຊີນ ງ່າຍຂຶ້ນ.

**ຂ້າງລຸ່ມນີ້ແມ່ນຄໍາແນະນໍາສໍາລັບວິທີການອູ້ມລູກຂອງທ່ານ. ຜູ້ສະໜອງການ ດູແລສຸຂະພາບຂອງທ່ານຈະມີຄໍາແນະນໍາທີ່ແຕກຕ່າງ ກັນໃນການອູ້ມລູກໃນ ລະຫວ່າງທີ່ກໍາລັງໃຫ້ການສັກຢາວັກຊີນ.**

## ອູ້ມແອນ້ອຍ

- ອູ້ມລູກຂອງທ່ານໄວ້ເທິງຕັກຂອງທ່ານ.
- ເອົາແຂນຂອງລູກທ່ານແນບໃສ່ເທິງໜ້າເອິກ ຫຼື ກ້ອງຂີ້ແຮ້ໜີບໄວ້ຄ່ອຍໆຄ້າຍຄືກັບການກອດ.
- ຈັບແຂນ ແລະ ຂາລູກໃຫ້ແໜ້ນ.
- ງໍຫົວເຂົ່າລູກຂອງທ່ານໜ້ອຍໜຶ່ງ ຊຶ່ງຈະຊ່ວຍໃຫ້ຜ່ອນຄາຍກ້າມ ຊີ້ນຕົ້ນຂາ.



## ອູ້ມເດັກນ້ອຍທີ່ກໍາລັງຮຽນຍ່າງຈາກດ້ານຂ້າງ

- ອູ້ມລູກຂອງທ່ານໄວ້ເທິງຕັກຂອງທ່ານ.
- ເອົາແຂນຂອງລູກທ່ານແນບໃສ່ເທິງໜ້າເອິກ ຫຼື ກ້ອງຂີ້ແຮ້ ແລະ ຫຼັງຂອງທ່ານ.ໃຫ້ໜີບລູກຂອງທ່ານໃສ່ລະຫວ່າງຂາຂອງທ່ານໃຫ້ແໜ້ນ ແລະ ເອື່ອຍໃສ່ກັບຕັ່ງ.
- ເອົາແຂນຂອງທ່ານກອດຫຼັງເດັກນ້ອຍ ແລະ ຈັບໂຕ ແລະ ແຂນຂອງເດັກນ້ອຍແນບໃສ່ໂຕທ່ານ.
- ໃຊ້ແຂນອີກເບື້ອງໜຶ່ງຈັບປາຍແຂນຂອງເດັກນ້ອຍແນບກັບທ້ອງ ຂອງເຂົາເຈົ້າ.
- ໃຊ້ຂາຂອງທ່ານທັງສອງເບື້ອງໜີບຂາເດັກນ້ອຍໄວ້.





## ກອດດ້ານໜ້າເດັກນ້ອຍ (ຂາຮັດໄວ້ ຫຼື ກອດ)

- ໃຫ້ເດັກນ້ອຍນັ່ງເທິງຕັກຂອງທ່ານ ປິ່ນໜ້າໃສ່ທ່ານ ແລະ ຈັບຂາຂອງເດັກນ້ອຍອ້ອມໃສ່ແອວຂອງທ່ານ.
- ເອົາແຂນຂອງທ່ານກອດແອວຂອງເດັກນ້ອຍ.
- ຈັບແຂນຂອງເດັກນ້ອຍຮັດໃສ່ແອວຂອງທ່ານ ແລະ ໃຊ້ແຂນຂອງທ່ານຮັດພວກເຂົາໃຫ້ແໜ້ນ.
- ພາດຫົວຂອງເດັກນ້ອຍໃສ່ບ່າຂອງທ່ານ ແລະ ປິ່ນຫົວອອກໄປດ້ານນອກ ເພື່ອບໍ່ໃຫ້ເຫັນການສັກຢາ.
- ຖ້າຫາກແຂນຂອງເດັກນ້ອຍພາດຢູ່ດ້ານຫຼັງຂອງທ່ານ, ກົດແຂນຂອງພວກເຂົາເບົາໆໃສ່ບ່ອນອີງຂອງຕັ່ງ.



## ອູ້ມແບບເອົາຫຼັງຕິດກັບໜ້າເອິກຂອງທ່ານ (ດ້ານໜ້າ)



- ອູ້ມລູກຂອງທ່ານໄວ້ເທິງຕັກຂອງທ່ານຫັນໜ້າອອກໄປທາງກົງກັນຂ້າມກັບທ່ານໃນຂະນະທີ່ທ່ານນັ່ງ.
- ໂອບກອດລູກຂອງທ່ານໄວ້ໃນຂະນະທີ່ກໍາລັງດໍາເນີນການ, ເອົາແຂນຂອງທ່ານໄຂວ່ກັນໄວ້ທາງໜ້າຂອງເດັກຈັບແຂນເບື້ອງຂວາຂອງເດັກດ້ວຍມືຊ້າຍຂອງທ່ານ ແລະ ແຂນເບື້ອງຊ້າຍຂອງເດັກດ້ວຍມືເບື້ອງຂວາຂອງທ່ານ.
- ໃຊ້ກົກຂາຂອງທ່ານໜີບຂາທັງສອງຂ້າງຂອງເດັກ ແລະ ເອົາຂາຂອງທ່ານໄຂວ່ກັນເຕັ່ງເດັກໄວ້.
- ລະວັງຫົວລູກຂອງທ່ານບໍ່ໃຫ້ຕໍາໜ້າທ່ານໃນເວລາທີ່ພວກເຂົາເໜັງຕີງ.

## ອູ້ມລູກຂອງທ່ານປີ້ນເອິກໃສ່ກັນ (ຮັດ ຫຼື ກອດ)



- ເອົາລູກຂອງທ່ານນັ່ງຕັກຫັນໜ້າເຂົ້າຫາທ່ານ ແລະ ໃຫ້ຂາເດັກນ້ອຍກອດແອວທ່ານໄວ້.
- ເອົາແຂນຂອງທ່ານກອດແອວຂອງເດັກນ້ອຍ.
- ເອົາແຂນຂອງເດັກນ້ອຍກອດແອວຂອງທ່ານ ແລະ ກອດເຂົາໃຫ້ແໜ້ນດ້ວຍແຂນຂອງທ່ານ.
- ລູກຂອງທ່ານສາມາດເອົາຫົວຂອງເຂົາໃສ່ເທິງບ່າຂອງທ່ານ ແລະ ປີ້ນຫົວ ໄປເບື້ອງກົງກັນຂ້າມກັບການສັກຢາ.
- ຖ້າແຂນຂອງເດັກພາດລົງໃສ່ຫຼັງຂອງທ່ານ, ໃຫ້ຍູ້ແຂນຂອງເດັກໃສ່ບ່ອນເອື່ອຍຂອງຕັ່ງຢ່າງເບົາໆ.

## ອູ້ມຈາກດ້ານຂ້າງແບບເບົາໆ



- ໃຫ້ລູກຂອງທ່ານນັ່ງຕັກຫັນທາງຂ້າງເຂົ້າຫາທ່ານ.
- ຮັດແຂນຂອງລູກທ່ານອ້ອມເຂົ້າມາໃສ່ຫຼັງຂອງທ່ານ ແລະ ກົດເຂົ້າຫາບ່ອນ ເອື່ອຍຂອງຕັ່ງຢ່າງເບົາໆ.
- ໃຊ້ແຂນຂອງທ່ານກອດຫຼັງຂອງລູກທ່ານໄວ້ ແລະ ຈັບກົກແຂນຂອງເຂົາ.
- ໃຊ້ມືອີກເບື້ອງໜຶ່ງຈັບແຂນ ແລະ ຂາຂອງເດັກນ້ອຍ.

## ອູ້ມແບບຂ້າງຕໍ່ຂ້າງ



- ນັ່ງຂ້າງໆລູກຂອງທ່ານ ແລະ ໃຊ້ແຂນຂອງທ່ານກອດບ່າຂອງເດັກ.
- ກອດລູກໃຫ້ແໜ້ນຕິດກັບໂຕທ່ານ.
- ໃຊ້ແຂນຂອງເດັກນ້ອຍກອດຫຼັງຂອງທ່ານໄວ້ ແລະ ກົດໂຕເຂົາເຂົ້າຫາບ່ອນເອື່ອຍຂອງຕັ່ງຢ່າງເບົາໆ.
- ຈັບແຂນຂອງເດັກນ້ອຍມາພາດໃສ່ໂຕຂອງທ່ານ.